ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

----=== 000 ===-----

ຄະນະກຳມະການຄຸ້ມຄອງຫຼັກຊັບ

ເລກທີ 001 /ຄຄຊ

ນະຄອນຫຼວງວຽງຈັນ, ວັນທີ 24 JUL 2013

# ລະບຽບ
# ວ່າດ້ວຍການຄຸ້ມຄອງການຊື້-ຂາຍຮຸ້ນທາງອິນເຕີເນັດ ຢູ່ ສປປ ລາວ

- ອີງຕາມກົດໝາຍວ່າດ້ວຍຫຼັກຊັບ ສະບັບເລກທີ 21/ສພຊ, ລົງວັນທີ 10 ທັນວາ 2013;
- ອີງຕາມກົດໝາຍວ່າດ້ວຍທຸລະກຳທາງເອເລັກໂຕຣນິກ ສະບັບເລກທີ 20/ສພຊ, ລົງວັນທີ 7 ທັນວາ 2012.

## ປະທານ ຄະນະກຳມະການຄຸ້ມຄອງຫຼັກຊັບ ອອກລະບຽບ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ລະບຽບສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການຕໍ່ກັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດທີ່ຕັ້ງ ຢູ່ ສປປ ລາວ ແລະ ຢູ່ຕ່າງປະເທດທີ່ເຄື່ອນໄຫວກ່ຽວພັນກັບການຊື້-ຂາຍຮຸ້ນທາງອິນເຕີເນັດ ຢູ່ ສປປ ລາວ ເພື່ອອຳນວຍຄວາມສະດວກໃຫ້ແກ່ຜູ້ລົງທຶນໃນເວລາສົ່ງຄຳສັ່ງຊື້-ຂາຍຮຸ້ນ ແນໃສ່ຮັບປະກັນການເຄື່ອນໄຫວວຽກງານດັ່ງກ່າວໃຫ້ມີ ປະສິດທິພາບ, ໂປ່ງໃສ ແລະ ຍຸຕິທຳ, ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຂອງຊາດ.

**ມາດຕາ 2 ການຊື້-ຂາຍຮຸ້ນທາງອິນເຕີເນັດ**

ການຊື້-ຂາຍຮຸ້ນທາງອິນເຕີເນັດ ແມ່ນ ການໃຫ້ບໍລິການຊື້-ຂາຍຮຸ້ນທາງອິນເຕີເນັດຂອງຜູ້ໃຫ້ບໍລິ ການແກ່ຜູ້ໃຊ້ບໍລິການຊຶ່ງຜູ້ໃຊ້ບໍລິການສາມາດສົ່ງຄຳສັ່ງຊື້ ຫຼື ຂາຍຮຸ້ນທາງອິນເຕີເນັດ ຢູ່ ສປປ ລາວ ແລະ ຢູ່ຕ່າງປະເທດ ເຂົ້າສູ່ລະບົບຈັບຄູ່ຂອງຕະຫຼາດຫຼັກຊັບ ດ້ວຍຄອມພິວເຕີຂອງຕົນເອງທີ່ໄດ້ລົງໂປຣແກຣມ ຊື້-ຂາຍຮຸ້ນທາງອິນເຕີເນັດ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບ ທີ່ນຳໃຊ້ໃນລະບຽບສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ການໃຫ້ບໍລິການຊື້-ຂາຍຮຸ້ນທາງອິນເຕີເນັດ** ໝາຍເຖິງ ການໃຫ້ບໍລິການແກ່ຜູ້ໃຊ້ບໍລິການ ເພື່ອສົ່ງຄຳສັ່ງຊື້-ຂາຍຮຸ້ນ, ເບິ່ງຂໍ້ມູນທາງດ້ານ ການບັນຊີ ແລະ ການລົງທຶນ ກ່ຽວກັບຮຸ້ນ ໂດຍຜ່ານຄອມພິວເຕີຂອງຜູ້ໃຊ້ບໍລິການ ຊຶ່ງປະກອບດ້ວຍຂໍ້ມູນ ດັ່ງນີ້:
   - ຂໍ້ມູນທາງດ້ານການບັນຊີ ເຊັ່ນ: ຍອດເຫຼືອບັນຊີຮຸ້ນ, ຍອດເຫຼືອບັນຊີເງິນຂອງຜູ້ໃຊ້ບໍລິການທີ່ມີຢູ່ ນຳຜູ້ໃຫ້ບໍລິການ, ຜົນການຈັບຄູ່ຊື້-ຂາຍຮຸ້ນ, ການຝາກຮຸ້ນ ແລະ ການຖອນຮຸ້ນ;
   - ຂໍ້ມູນການຊື້-ຂາຍໃນຕະຫຼາດຫຼັກຊັບເຊັ່ນ: ລາຄາຮຸ້ນແຕ່ລະຕົວໃນປະຈຸບັນ, ດັດສະນີລາຄາຮຸ້ນກຸ່ມອຸດສາຫະກຳ, ແນວໂນ້ມດັດສະນີປະຈຳວັນຂອງກຸ່ມອຸດສາຫະກຳ, ເສັ້ນສະແດງຂອງດັດສະນີລາຄາຮຸ້ນກຸ່ມອຸດສາຫະກຳ ແລະ ຂໍ້ມູນອື່ນໆ;
   - ຂໍ້ມູນປະເພດຄຳສັ່ງຊື້-ຂາຍຮຸ້ນເຊັ່ນ: ຄຳສັ່ງຊື້ ແລະ ຄຳສັ່ງຂາຍ.
2. **ຜູ້ໃຫ້ບໍລິການ** ໝາຍເຖິງ ບໍລິສັດຫຼັກຊັບທີ່ໄດ້ຮັບອະນຸຍາດໃນ ການສ້າງຕັ້ງ ແລະ ການເຄື່ອນໄຫວ ຢູ່ ສປປ ລາວ ທີ່ໃຫ້ບໍລິການຊື້-ຂາຍຮຸ້ນທາງອິນເຕີເນັດ;
3. **ຜູ້ໃຫ້ບໍລິການສັນຍານເຄືອຂ່າຍອິນເຕີເນັດ** ໝາຍເຖິງ ບໍລິສັດໂທລະຄົມມະນາຄົມທີ່ໃຫ້ບໍລິການທາງດ້ານເຄືອຂ່າຍອິນເຕີເນັດໃຫ້ແກ່ຜູ້ໃຫ້ບໍລິການ ແລະ ຜູ້ໃຊ້ບໍລິການ;
4. **ລະບົບຊື້-ຂາຍຮຸ້ນທາງອິນເຕີເນັດ** ໝາຍເຖິງ ອຸປະກອນ ຮາດແວຣ ແລະ ຊອບແວຣ ທີ່ໄດ້ມາດຕະຖານຕາມທີ່ໄດ້ກຳນົດໄວ້ໃນ ໝວດທີ 2 ຂອງລະບຽບສະບັບນີ້ ທີ່ນຳໃຊ້ເຂົ້າໃນການໃຫ້ບໍລິການຊື້-ຂາຍຮຸ້ນທາງອິນເຕີເນັດ ຊຶ່ງປະກອບດ້ວຍລາຍລະອຽດ ດັ່ງນີ້:
   - ຄອມພິວເຕີຂອງຜູ້ໃຊ້ບໍລິການ;
   - ໂປຣແກຣມຊື້-ຂາຍຮຸ້ນທາງອິນເຕີເນັດສຳລັບຜູ້ໃຊ້ບໍລິການ;
   - ເຄືອຂ່າຍອິນເຕີເນັດ;
   - ໜ່ວຍແມ່ຂ່າຍສຳລັບບັນຈຸລະບົບຊື້-ຂາຍຮຸ້ນທາງອິນເຕີເນັດ ແລະ ອຸປະກອນເຊື່ອມຕໍ່ຂອງຜູ້ໃຫ້ບໍລິການ;
   - ລະບົບບັນຊີແມ່ຄ່າຍໃຫຍ່ຂອງຜູ້ໃຫ້ບໍລິການ.
5. **ເຈົ້າຂອງລະບົບຊື້-ຂາຍຮຸ້ນທາງອິນເຕີເນັດ (ເຈົ້າຂອງລະບົບ)** ໝາຍເຖິງ ຜູ້ລົງທຶນສ້າງ ແລະ ພັດທະນາລະບົບຊື້-ຂາຍຮຸ້ນທາງອິນເຕີເນັດ;
6. **ໂປຣແກຣມຊື້-ຂາຍຮຸ້ນທາງອິນເຕີເນັດ (ໂປຣແກຣມ)** ໝາຍເຖິງ ຊອບແວຣທີ່ຜູ້ໃຊ້ບໍລິການຕິດຕັ້ງໃນຄອມພິວເຕີຂອງຕົນ ເພື່ອນຳໃຊ້ການບໍລິການຊື້-ຂາຍຮຸ້ນທາງອິນເຕີເນັດ;
7. **ສັນຍາໃຊ້ບໍລິການຊື້-ຂາຍຮຸ້ນທາງອິນເຕີເນັດ** ໝາຍເຖິງ ສັນຍາລະຫວ່າງຜູ້ໃຊ້ບໍລິການກັບຜູ້ໃຫ້ບໍລິການ ເພື່ອຈຸດປະສົງນຳໃຊ້ບໍລິການຊື້-ຂາຍຮຸ້ນທາງອິນເຕີເນັດ;
8. **ສັນຍາເຊົ່າລະບົບຊື້-ຂາຍຮຸ້ນທາງອິນເຕີເນັດ** ໝາຍເຖິງ ສັນຍາລະຫວ່າງຜູ້ໃຫ້ບໍລິການກັບເຈົ້າຂອງລະບົບຊື້ຂາຍຮຸ້ນທາງອິນເຕີເນັດ ເພື່ອນຳໃຊ້ລະບົບຊື້-ຂາຍຮຸ້ນທາງອິນເຕີເນັດ;
9. **ບຸກຄົນ ແລະ ນິຕິບຸກຄົນພາຍໃນ** ໝາຍເຖິງ ຜູ້ລົງທຶນປະເພດ ບຸກຄົນ, ສະຖາບັນ ແລະ ອົງການຈັດຕັ້ງຂອງລາວທີ່ສົ່ງຄຳສັ່ງຊື້-ຂາຍຮຸ້ນທາງອິນເຕີເນັດຢູ່ຕະຫຼາດຫຼັກຊັບ;
10. **ບຸກຄົນ ແລະ ນິຕິບຸກຄົນຕ່າງປະເທດທີ່ຕັ້ງ ຢູ່ ສປປ ລາວ** ໝາຍເຖິງ ຜູ້ລົງທຶນປະເພດ ບຸກຄົນ, ສະຖາບັນ ແລະ ອົງການຈັດຕັ້ງຂອງຕ່າງປະເທດ ທີ່ອາໃສ ຢູ່ ສປປ ລາວ ທີ່ສົ່ງຄຳສັ່ງຊື້-ຂາຍຮຸ້ນທາງອິນເຕີເນັດຢູ່ຕະຫຼາດຫຼັກຊັບ;

11. **ບຸກຄົນ ແລະ ນິຕິບຸກຄົນທີ່ຕັ້ງຢູ່ນອກ ສປປ ລາວ** ໝາຍເຖິງ ຜູ້ລົງທຶນປະເພດ ບຸກຄົນ, ສະຖາບັນ ແລະ ອົງການຈັດຕັ້ງຂອງລາວ ແລະ ຂອງຕ່າງປະເທດທີ່ອາໃສຢູ່ນອກ ສປປ ລາວ ທີ່ສົ່ງຄຳສັ່ງ ຊື້-ຂາຍຮຸ້ນທາງອິນເຕີເນັດຢູ່ຕະຫຼາດຫຼັກຊັບ;
12. **ລະຫັດຜ່ານ** ໝາຍເຖິງ ລະຫັດສຳລັບການເຂົ້າສູ່ໂປຣແກຣມການຊື້-ຂາຍຮຸ້ນທາງອິນເຕີເນັດ;
13. **ການຊື້-ຂາຍຮຸ້ນທີ່ບໍ່ເປັນທຳ** ໝາຍເຖິງ ການນຳໃຊ້ຂໍ້ມູນພາຍໃນ, ການປັ່ນຕະຫຼາດ, ການປອມແປງຂໍ້ມູນດ້ານການເງິນ ແລະ ການປອມແປງເອກະສານລາຍງານການເງິນທີ່ອາດສົ່ງ ຫຼື ສົ່ງຜົນກະທົບຕໍ່ຜົນປະໂຫຍດຂອງຜູ້ລົງທຶນລາຍອື່ນ ຫຼື ສະຖຽນລະພາບຂອງຕະຫຼາດທຶນໂດຍລວມ.

**ມາດຕາ 4 ຫຼັກການລວມ**

ການຊື້-ຂາຍຮຸ້ນທາງອິນເຕີເນັດໃຫ້ປະຕິບັດຕາມຫຼັກການຕົ້ນຕໍ ດັ່ງນີ້:

1. ປົກປ້ອງສິດ ແລະ ຜົນປະໂຫຍດຂອງຜູ້ລົງທຶນ;
2. ປ້ອງກັນ ແລະ ຫຼຸດຜ່ອນຄວາມສ່ຽງຕໍ່ລະບົບການເງິນ;
3. ອິດສະຫຼະ ແລະ ສະໝັກໃຈເຂົ້າຮ່ວມໃນການຊື້-ຂາຍຮຸ້ນ;
4. ຮັບປະກັນດ້ານຄວາມປອດໄພ, ສະດວກ, ວ່ອງໄວ ແລະ ມີປະສິດທິພາບ;
5. ສັດຊື່ບໍລິສຸດ, ສະເໝີພາບ, ໂປ່ງໃສ, ຍຸຕິທຳ, ສອດຄ່ອງກັບລະບຽບສະບັບນີ້ ແລະ ລະບຽບອື່ນທີ່ກ່ຽວຂ້ອງ;
6. ສັນຍານເຄືອຂ່າຍອິນເຕີເນັດຕ້ອງຮັບປະກັນໃຫ້ແກ່ຜູ້ໃຫ້ບໍລິການ ແລະ ຜູ້ໃຊ້ບໍລິການໃນຊ່ວງເວລາຊື້-ຂາຍ.

**ມາດຕາ 5 ຂອບເຂດນຳໃຊ້**

ລະບຽບສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດທີ່ຕັ້ງ ຢູ່ ສປປ ລາວ ແລະ ຢູ່ຕ່າງປະເທດ ທີ່ເຄື່ອນໄຫວກ່ຽວຂ້ອງກັບການຊື້-ຂາຍຮຸ້ນທາງອິນເຕີເນັດ ຫຼື ທີ່ມີສ່ວນຮ່ວມໂດຍ ທາງກົງ ຫຼື ທາງອ້ອມ ໃນການເຄື່ອນໄຫວຊື້-ຂາຍຮຸ້ນທາງອິນເຕີເນັດ ຢູ່ ສປປ ລາວ.

## ໝວດທີ 2
## ມາດຕະຖານກ່ຽວກັບລະບົບຊື້-ຂາຍຮຸ້ນທາງອິນເຕີເນັດ

**ມາດຕາ 6 ມາດຕະຖານຂອງລະບົບການຊື້-ຂາຍຮຸ້ນທາງອິນເຕີເນັດ**

ລະບົບການຊື້-ຂາຍຮຸ້ນທາງອິນເຕີເນັດຕ້ອງມີມາດຕະຖານ ດັ່ງນີ້:

1. ມີຄວາມຮັບປະກັນ, ມີປະສິດທິພາບ ແລະ ໂປ່ງໃສ ໃນການປະມວນຄຳສັ່ງການຊື້-ຂາຍຮຸ້ນທາງອິນເຕີເນັດ;
2. ມີລະບົບກັ່ນຕອງຄຳສັ່ງການຊື້-ຂາຍຮຸ້ນທາງອິນເຕີເນັດທີ່ສາມາດກວດສອບຂໍ້ມູນຍ້ອນຫຼັງໄດ້;
3. ມີລະບົບປ້ອງກັນການເຈາະລະບົບ ແລະ ການລັກຂໍ້ມູນທາງອິນເຕີເນັດພ້ອມທັງສາມາດແກ້ໄຂຂໍ້ຜິດພາດທີ່ເກີດຂຶ້ນຈາກລະບົບໃຫ້ທັນເວລາ;
4. ການສ້າງ, ການປັບປຸງ ແລະ ການພັດທະນາ ລະບົບຊື້-ຂາຍຮຸ້ນທາງອິນເຕີເນັດຕ້ອງຮັບປະກັນການເຊື່ອມຕໍ່ ແລະ ສາມາດດຳເນີນງານກັບລະບົບອື່ນທີ່ກ່ຽວຂ້ອງກັບລະບົບຊື້-ຂາຍຮຸ້ນທາງອິນເຕີເນັດໄດ້;

5. ມີລະບົບ ກວດກາ ແລະ ປ້ອງກັນ ຄຳສັ່ງຊື້-ຂາຍຮຸ້ນຕາມທີ່ກຳນົດໄວ້ໃນ ມາດຕາ 3, ຂໍ້ 14 ຂອງ ລະບຽບສະບັບນີ້;
6. ມີລະບົບແຈ້ງກ່ຽວກັບຜົນການປະຕິເສດ ແລະ ຢືນຢັນການສົ່ງຄຳສັ່ງຊື້-ຂາຍຮຸ້ນທາງອິນເຕີເນັດ ໃຫ້ແກ່ຜູ້ໃຊ້ບໍລິການ;
7. ສາມາດລາຍງານຜົນ ການຈັບຄູ່ຊື້-ຂາຍຮຸ້ນທາງອິນເຕີເນັດໃຫ້ແກ່ຜູ້ໃຊ້ບໍລິການ ພາຍຫຼັງສິ້ນສຸດ ແຕ່ລະຊ່ວງເວລາຊື້-ຂາຍຮຸ້ນ;
8. ມີລະບົບທີ່ສາມາດຊີ້ບອກຄຳສັ່ງຊື້-ຂາຍຮຸ້ນທາງອິນເຕີເນັດ ແລະ ຄຳສັ່ງຊື້-ຂາຍຮຸ້ນແບບປົກກະຕິ ເມື່ອເຂົ້າສູ່ລະບົບຈັບຄູ່ຂອງຕະຫລາດຫລັກຊັບ;
9. ຄວາມໄວຂອງສັນຍານເຄືອຂ່າຍອິນເຕີເນັດ ຕ້ອງຮັບປະກັນໃຫ້ແກ່ການໃຊ້ບໍລິການຊື້-ຂາຍຮຸ້ນ ທາງອິນເຕີເນັດ;
10. ສາມາດສະໜອງຂໍ້ມູນຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 3, ຂໍ້ 1 ຂອງລະບຽບສະບັບນີ້;
11. ມາດຕະຖານອື່ນ ຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

**ມາດຕາ 7 ມາດຕະຖານທາງດ້ານຄວາມປອດໄພຂອງລະບົບຊື້-ຂາຍຮຸ້ນທາງອິນເຕີເນັດ**

ລະບົບການຊື້-ຂາຍຮຸ້ນທາງອິນເຕີເນັດຕ້ອງມີມາດຕະຖານຄວາມປອດໄພ ດັ່ງນີ້:

1. ມີລະບົບປ້ອງກັນຄວາມປອດໄພໃນການເຂົ້າເຖິງລະບົບຊື້-ຂາຍຮຸ້ນທາງອິນເຕີເນັດ, ລະບົບປ້ອງກັນການບຸກລຸກ ແລະ ກວດຈັບການບຸກລຸກ, ລະບົບປ້ອງກັນໄວລັສ ແລະ ເຄື່ອງມືອື່ນໆໃນການຮັກສາຄວາມປອດໄພຂອງລະບົບເຄືອຂ່າຍ, ລະບົບປະຕິບັດການ, ລະບົບຖານຂໍ້ມູນ ແລະ ໂປຣແກຣມນຳໃຊ້;
2. ມີການບັນທຶກລະບົບຮັກສາຄວາມປອດໄພ ເຊັ່ນ: ລະບົບປ້ອງກັນຄວາມປອດໄພທາງດ້ານເຄືອຂ່າຍ, ເຄືອແມ່ຂ່າຍ, ຖານຂໍ້ມູນ ແລະ ທຸກໆລະບົບທີ່ກ່ຽວຂ້ອງ;
3. ມີລະບົບຄວບຄຸມ ແລະ ລະບົບປ້ອງກັນການເຂົ້າອອກລະບົບຊື້-ຂາຍຮຸ້ນທາງອິນເຕີເນັດ ພ້ອມທັງສາມາດກວດສອບຂໍ້ມູນການເຂົ້າອອກຍ້ອນຫຼັງໄດ້;
4. ການເຊື່ອມຕໍ່ເຄືອຂ່າຍກັບພາກສ່ວນອື່ນຕ້ອງຮັບປະກັນຄວາມປອດໄພ;
5. ລະບົບຕ້ອງເຂົ້າລະຫັດ ຂໍ້ມູນການຊື້-ຂາຍຮຸ້ນທາງອິນເຕີເນັດທຸກຄັ້ງ ກ່ອນຈະດຳເນີນທຸລະກຳການຊື້-ຂາຍຮຸ້ນແລະ ສົ່ງຂໍ້ມູນເຂົ້າສູ່ລະບົບຊື້-ຂາຍຮຸ້ນທາງອິນເຕີເນັດ;
6. ມີໂປຣແກຣມປ້ອງກັນການລັກຂໍ້ມູນຂອງ ຜູ້ໃຊ້ບໍລິການໃນເວລາພິມຂໍ້ມູນ ເພື່ອປ້ອງກັນການຮົ່ວໄຫຼຂໍ້ມູນຂອງຜູ້ໃຊ້ບໍລິການ;
7. ມີຊື່ຜູ້ນຳໃຊ້ ແລະ ລະຫັດຜ່ານໃນການເຂົ້າສູ່ລະບົບຊື້-ຂາຍຮຸ້ນທາງອິນເຕີເນັດທີ່ຮັບປະກັນ ແລະ ປອດໄພ;
8. ສາມາດຢັ້ງຢືນຕົວຕົນທີ່ແທ້ຈິງຂອງຜູ້ໃຊ້ບໍລິການ;
9. ໂປຣແກຣມສາມາດສິ້ນສຸດເວລາການນຳໃຊ້ຕາມການກຳນົດຂອງຜູ້ໃຊ້ບໍລິການ;
10. ມີລະຫັດຜ່ານຢ່າງໜ້ອຍຕ້ອງປະກອບດ້ວຍແປດຫຼັກ ເພື່ອນຳໃຊ້ເຂົ້າໂປຣແກຣມຊື້-ຂາຍຮຸ້ນທາງອິນເຕີເນັດ;
11. ມາດຕະຖານອື່ນ ຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

**ມາດຕາ 8 ລະບົບສຳຮອງ ແລະ ຄວາມຕໍ່ເນື່ອງ**

ລະບົບສຳຮອງ ແລະ ຄວາມຕໍ່ເນື່ອງຂອງລະບົບການຊື້-ຂາຍຮຸ້ນທາງອິນເຕີເນັດປະກອບມີ ດັ່ງນີ້:

1. ມີວິທີການ ສຳຮອງຂໍ້ມູນ ແລະ ການເກັບຮັກສາຂໍ້ມູນ ທີ່ກ່ຽວຂ້ອງກັບລະບົບການຊື້-ຂາຍຮຸ້ນທາງອິນເຕີເນັດໃຫ້ມີຄວາມ ປອດໄພ ແລະ ມີປະສິດທິພາບ;
2. ມີວິທີການກູ້ຂໍ້ມູນຂອງລະບົບການຊື້-ຂາຍຮຸ້ນທາງອິນເຕີເນັດທີ່ຮັບປະກັນຄວາມຖືກຕ້ອງ, ຄົບຖ້ວນ ແລະ ທັນກັບສະພາບການ;
3. ມີການທົດສອບຄວາມຕໍ່ເນື່ອງ ໃນການດຳເນີນງານຂອງລະບົບຊື້-ຂາຍຮຸ້ນທາງອິນເຕີເນັດຢ່າງສະໝໍ່າສະເໝີ;
4. ມີແຜນການຮອງຮັບເຫດການຕ່າງໆ ທີ່ເກີດຂຶ້ນໄດ້ເປັນຢ່າງດີ;
5. ຕ້ອງມີສາຍສັນຍານເຄືອຂ່າຍອິນເຕີເນັດ ສາຍຫຼັກ ແລະ ສາຍສຳຮອງ ຈາກຜູ້ໃຫ້ບໍລິການສັນຍານເຄືອຂ່າຍອິນເຕີເນັດ;
6. ຂໍ້ມູນສຳຄັນທີ່ກ່ຽວຂ້ອງກັບລະບົບຊື້-ຂາຍຮຸ້ນທາງອິນເຕີເນັດ ຕ້ອງເກັບຮັກສາໄວ້ຢ່າງໜ້ອຍ ສິບປີ.

## ໝວດທີ 3
## ການຂໍອະນຸຍາດ, ການໂຈະ ແລະ ການຍົກເລີກ ເຈົ້າຂອງລະບົບຊື້-ຂາຍຮຸ້ນທາງອິນເຕີເນັດ

### ມາດຕາ 9 ເງື່ອນໄຂຂອງເຈົ້າຂອງລະບົບ

ຜູ້ທີ່ມີຈຸດປະສົງ ເປັນເຈົ້າຂອງລະບົບຊື້-ຂາຍຮຸ້ນຜ່ານອິນເຕີເນັດ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ເປັນເຈົ້າຂອງລະບົບຊື້-ຂາຍຮຸ້ນທາງອິນເຕີເນັດທີ່ໄດ້ລົງທຶນ ສ້າງ ແລະ ພັດທະນາ ລະບົບຊື້-ຂາຍຮຸ້ນທາງອິນເຕີເນັດດ້ວຍຕົນເອງ;
2. ລະບົບຊື້-ຂາຍຮຸ້ນທາງອິນເຕີເນັດ ໄດ້ຮັບການພັດທະນາຖືກຕ້ອງຕາມມາດຕະຖານທີ່ໄດ້ກຳນົດໄວ້ໃນ ໝວດທີ 2 ຂອງລະບຽບສະບັບນີ້;
3. ມີສັນຍາໃຫ້ເຊົ່າລະບົບຊື້-ຂາຍຮຸ້ນທາງອິນເຕີເນັດກັບຜູ້ໃຫ້ບໍລິການ;
4. ລະບົບໄດ້ຕິດຕັ້ງ ແລະ ທົດສອບເປັນຢ່າງດີ;
5. ມີລະບຽບຄຸ້ມຄອງຜູ້ຮັບຜິດຊອບຄວບຄຸມລະບົບຊື້-ຂາຍຮຸ້ນທາງອິນເຕີເນັດ ແລະ ຜູ້ຮັບຜິດຊອບຕິດຕາມຜູ້ໃຫ້ບໍລິການຊື້-ຂາຍຮຸ້ນທາງອິນເຕີເນັດ;
6. ມີລະບຽບສະເພາະເພື່ອຄຸ້ມຄອງສະມາຊິກທີ່ເປັນຜູ້ໃຫ້ບໍລິການຊື້-ຂາຍຮຸ້ນທາງອິນເຕີເນັດ;
7. ເງື່ອນໄຂອື່ນ ຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

### ມາດຕາ 10 ການຍື່ນສຳນວນຄຳຮ້ອງ

ຜູ້ທີ່ມີຈຸດປະສົງຕ້ອງການພັດທະນາລະບົບຊື້-ຂາຍຮຸ້ນຜ່ານອິນເຕີເນັດ ເພື່ອເປັນຜູ້ໃຫ້ບໍລິການຊື້-ຂາຍຮຸ້ນທາງອິນເຕີເນັດ ຫຼື ເປັນຜູ້ໃຫ້ເຊົ່າລະບົບຊື້-ຂາຍຮຸ້ນຜ່ານອິນເຕີເນັດ ແກ່ຜູ້ໃຫ້ບໍລິການຕ້ອງຍື່ນສຳນວນຄຳຮ້ອງຕໍ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຊຶ່ງປະກອບມີເອກະສານ ດັ່ງນີ້:

1. ໃບຄຳຮ້ອງຕາມແບບພິມທີ່ ສຳນັກງານ ຄະນະກຳມະການຄຸ້ມຄອງຫຼັກຊັບກຳນົດ;
2. ໃບສະແດງຄວາມເປັນເຈົ້າຂອງລະບົບ;
3. ເອກະສານກ່ຽວກັບ ໂຄງສ້າງ, ອົງປະກອບ, ຂັ້ນຕອນ ແລະ ລາຍລະອຽດຕ່າງໆຂອງລະບົບ;
4. ໃບຢັ້ງຢືນຜ່ານການກວດກາເຕັກນິກຈາກ ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ;
5. ບັນຊີລາຍຊື່ຜູ້ຮັບຜິດຊອບຄວບຄຸມລະບົບຊື້-ຂາຍຮຸ້ນທາງອິນເຕີເນັດ;

6. ບັນຊີລາຍຊື່ພະນັກງານຮັບຜິດຕາມຜູ້ໃຫ້ບໍລິການຊື້-ຂາຍຮຸ້ນທາງອິນເຕີເນັດ;
7. ສຳເນົາສັນຍາເຊົ່າເຄືອຂ່າຍອິນເຕີເນັດກັບຜູ້ໃຫ້ບໍລິການເຄືອຂ່າຍອິນເຕີເນັດ;
8. ສຳເນົາສັນຍາໃຫ້ເຊົ່າລະບົບຊື້-ຂາຍຮຸ້ນທາງອິນເຕີເນັດກັບຜູ້ໃຫ້ບໍລິການ;
9. ສຳເນົາລະບຽບຄຸ້ມຄອງຜູ້ຮັບຜິດຊອບຄວບຄຸມລະບົບຊື້-ຂາຍຮຸ້ນທາງອິນເຕີເນັດ ແລະ ຜູ້ຮັບຜິດຊອບຕິດຕາມຜູ້ໃຫ້ບໍລິການຊື້-ຂາຍຮຸ້ນທາງອິນເຕີເນັດ;
10. ສຳເນົາລະບຽບທີ່ໃຊ້ເພື່ອຄຸ້ມຄອງສະມາຊິກທີ່ເປັນຜູ້ໃຫ້ບໍລິການຊື້-ຂາຍຮຸ້ນທາງອິນເຕີເນັດ;
11. ສຳເນົາເອກະສານອື່ນ ຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

**ມາດຕາ 11 ການພິຈາລະນາ**

ພາຍຫຼັງທີ່ໄດ້ຮັບສຳນວນຄຳຮ້ອງ ຖືກຕ້ອງ ແລະ ຄົບຖ້ວນ ຕາມກຳນົດໃນ ມາດຕາ 10 ຂອງລະບຽບສະບັບນີ້, ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຈະພິຈາລະນາການຂໍອະນຸຍາດເປັນຜູ້ໃຫ້ບໍລິການພາຍໃນກຳນົດເວລາ ສີ່ສິບຫ້າວັນ ນັບແຕ່ວັນທີ່ໄດ້ຮັບສຳນວນຄຳຮ້ອງຖືກຕ້ອງ ແລະ ຄົບຖ້ວນເປັນຕົ້ນໄປ.

ລະບົບຈະໄດ້ຮັບອະນຸຍາດຢ່າງເປັນທາງການກໍ່ຕໍ່ເມື່ອ ໄດ້ຜ່ານການກວດກາມາດຕະຖານຕາມທີ່ກຳນົດໄວ້ໃນ ໝວດທີ 2 ຂອງລະບຽບສະບັບນີ້ຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ, ໃນກໍລະນີປະຕິເສດການຂໍອະນຸຍາດ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຈະແຈ້ງຕອບຜູ້ຮ້ອງຂໍຊາບຢ່າງເປັນລາຍລັກອັກສອນ ພ້ອມດ້ວຍເຫດຜົນ.

**ມາດຕາ 12 ການໂຈະລະບົບຊື້-ຂາຍຮຸ້ນທາງອິນເຕີເນັດຊົ່ວຄາວ**

ລະບົບຊື້-ຂາຍຮຸ້ນທາງອິນເຕີເນັດຈະຖືກສັ່ງໂຈະຊົ່ວຄາວໃນກໍລະນີ ຕໍ່ໄປນີ້:
1. ລະບົບຊື້-ຂາຍຮຸ້ນທາງອິນເຕີເນັດທີ່ ສ້າງ ແລະ ພັດທະນາ ໂດຍບໍ່ສອດຄ່ອງກັບມາດຕະຖານໃດໜຶ່ງທີ່ໄດ້ກຳນົດໄວ້ໃນ ມາດຕາ 6, 7 ແລະ 8 ຂອງລະບຽບສະບັບນີ້;
2. ລະບົບຊື້-ຂາຍຮຸ້ນທາງອິນເຕີເນັດຂັດຂ້ອງທາງດ້ານເຕັກນິກທີ່ບໍ່ສາມາດສືບຕໍ່ໃຫ້ບໍລິການໄດ້;
3. ລະບົບຊື້-ຂາຍຮຸ້ນທາງອິນເຕີເນັດໄດ້ຮັບຜົນກະທົບຈາກເຫດສຸດວິໄສ;
4. ກໍລະນີອື່ນ ຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

**ມາດຕາ 13 ການຍົກເລີກລະບົບຊື້-ຂາຍຮຸ້ນທາງອິນເຕີເນັດ**

ລະບົບຊື້-ຂາຍຮຸ້ນທາງອິນເຕີເນັດຈະຖືກສັ່ງຍົກເລີກໃນກໍລະນີ ຕໍ່ໄປນີ້:
1. ເຈົ້າຂອງລະບົບຊື້-ຂາຍຮຸ້ນທາງອິນເຕີເນັດ ຍົກເລີກດ້ວຍຄວາມສະໝັກໃຈ ຕາມການເຫັນດີຂອງສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;
2. ບໍ່ສາມາດແກ້ໄຂບັນຫາໃດໜຶ່ງທີ່ກຳນົດໄວ້ໃນ ມາດຕາ 12 ຂອງລະບຽບສະບັບນີ້ ພາຍໃນກຳນົດເວລາຕາມແຈ້ງການຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;
3. ກໍລະນີອື່ນ ຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

## ໝວດທີ 4
## ການຂໍອະນຸຍາດ, ການໂຈະ ແລະ ການຍົກເລີກ ການເປັນຜູ້ໃຫ້ບໍລິການ

**ມາດຕາ 14 ເງື່ອນໄຂຂອງຜູ້ໃຫ້ບໍລິການ**

ຜູ້ໃຫ້ບໍລິການຕ້ອງມີເງື່ອນ ໄຂດັ່ງນີ້:

1. ເປັນບໍລິສັດຫຼັກຊັບທີ່ໄດ້ຮັບການອະນຸຍາດສ້າງຕັ້ງ ແລະ ເຄື່ອນໄຫວ ຢູ່ ສປປ ລາວ ແລະ ເປັນສະມາຊິກຂອງຕະຫຼາດຫຼັກຊັບ;
2. ມີລະບົບຊື້-ຂາຍຮຸ້ນທາງອິນເຕີເນັດທີ່ໄດ້ມາດຕະຖານຕາມການກຳນົດໃນ ມາດຕາ 6, 7 ແລະ 8 ຂອງລະບຽບສະບັບນີ້;
3. ມີລະບຽບຄຸ້ມຄອງຜູ້ໃຊ້ບໍລິການທີ່ເປັນລູກຄ້າຂອງຕົນ ແລະ ມີພະນັກງານຕິດຕາມຜູ້ໃຊ້ບໍລິການຊື້-ຂາຍຮຸ້ນທາງອິນເຕີເນັດ;
4. ມີສັນຍາລະຫວ່າງຜູ້ໃຫ້ບໍລິການກັບຜູ້ໃຊ້ບໍລິການ;
5. ມີສັນຍາເຊົ່າເຄືອຂ່າຍອິນເຕີເນັດກັບຜູ້ໃຫ້ບໍລິການເຄືອຂ່າຍອິນເຕີເນັດທີ່ຮັບປະກັນ ແລະ ມີສະເຖຍລະພາບ;
6. ມີສູນບໍລິການລູກຄ້າ;
7. ມີສັນຍາເຊົ່າລະບົບຊື້-ຂາຍຮຸ້ນທາງອິນເຕີເນັດ ກັບເຈົ້າຂອງລະບົບຊື້-ຂາຍຮຸ້ນທາງອິນເຕີເນັດ ກໍລະນີຜູ້ໃຫ້ບໍລິການບໍ່ໄດ້ເປັນເຈົ້າຂອງລະບົບຊື້-ຂາຍຮຸ້ນທາງອິນເຕີເນັດ;
8. ເງື່ອນໄຂອື່ນ ຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

**ມາດຕາ 15 ການຍື່ນສຳນວນຄຳຮ້ອງ**

ຜູ້ທີ່ມີຈຸດປະສົງຕ້ອງການເປັນຜູ້ໃຫ້ບໍລິການຕ້ອງຍື່ນສຳນວນຄຳຮ້ອງຕໍ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຊຶ່ງປະກອບມີເອກະສານ ດັ່ງນີ້:

1. ໃບຄຳຮ້ອງຕາມແບບພິມທີ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບກຳນົດ;
2. ບັນຊີລາຍຊື່ຜູ້ຮັບຜິດຊອບຄວບຄຸມລະບົບຊື້-ຂາຍຮຸ້ນທາງອິນເຕີເນັດ;
3. ບັນຊີລາຍຊື່ພະນັກງານຮັບຕິດຕາມຜູ້ໃຊ້ບໍລິການຊື້-ຂາຍຮຸ້ນທາງອິນເຕີເນັດ;
4. ສຳເນົາສັນຍາເຊົ່າເຄືອຂ່າຍອິນເຕີເນັດກັບຜູ້ໃຫ້ບໍລິການເຄືອຂ່າຍອິນເຕີເນັດ;
5. ສຳເນົາລະບຽບຄຸ້ມຄອງຜູ້ໃຊ້ບໍລິການທີ່ເປັນລູກຄ້າ;
6. ສຳເນົາສັນຍາລະຫວ່າງຜູ້ໃຫ້ບໍລິການກັບຜູ້ໃຊ້ບໍລິການ;
7. ສຳເນົາສັນຍາເຊົ່າລະບົບຊື້-ຂາຍຮຸ້ນທາງອິນເຕີເນັດກັບເຈົ້າຂອງລະບົບຊື້-ຂາຍຮຸ້ນທາງອິນເຕີເນັດ;
8. ສຳເນົາເອກະສານອື່ນ ຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

**ມາດຕາ 16 ການພິຈາລະນາ**

ພາຍຫຼັງທີ່ໄດ້ຮັບສຳນວນຄຳຮ້ອງ ຄົບຖ້ວນ ແລະ ຖືກຕ້ອງ ຕາມກຳນົດໃນ ມາດຕາ 15 ຂອງລະບຽບສະບັບນີ້, ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຈະພິຈາລະນາການຂໍອະນຸຍາດເປັນຜູ້ໃຫ້ບໍລິການພາຍໃນກຳນົດເວລາ ສີ່ສິບຫ້າວັນ ນັບແຕ່ວັນທີ່ໄດ້ຮັບສຳນວນຄຳຮ້ອງຖືກຕ້ອງ ແລະ ຄົບຖ້ວນເປັນຕົ້ນໄປ, ໃນກໍລະນີປະຕິເສດການຂໍອະນຸຍາດ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຈະແຈ້ງຕອບຜູ້ຮ້ອງຂໍຊາບຢ່າງເປັນລາຍລັກອັກສອນ ພ້ອມດ້ວຍເຫດຜົນ.

**ມາດຕາ 17 ການໂຈະການໃຫ້ບໍລິການຊົ່ວຄາວ**

ຜູ້ໃຫ້ບໍລິການຈະຖືກສັ່ງໂຈະຊົ່ວຄາວໃນກໍລະນີ ຕໍ່ໄປນີ້:

1. ລະບົບຊື້-ຂາຍຮຸ້ນທາງອິນເຕີເນັດຂັດຂ້ອງ ຫຼື ຫຼົ້ມ;

2. ມີຫຼັກຖານຢັ້ງຢືນວ່າຜູ້ໃຫ້ບໍລິການທີ່ອາດສົ່ງ ຫຼື ສົ່ງຜົນກະທົບຕໍ່ຜົນປະໂຫຍດຂອງນັກລົງທຶນ ຫຼື ສະຖຽນລະພາບຂອງຕະຫຼາດທຶນໂດຍລວມ;
3. ບໍ່ປະຕິບັດຕາມເງື່ອນໄຂໃດໜຶ່ງທີ່ກຳນົດໄວ້ໃນ ມາດຕາ 14 ຂອງລະບຽບສະບັບນີ້;
4. ດຳເນີນການໃດໜຶ່ງທີ່ເປັນການລະເມີດຂໍ້ກຳນົດທີ່ໄດ້ລະບຸໄວ້ໃນ ມາດຕາ 37, ຂໍ້ 3 ຂອງລະບຽບສະບັບນີ້;
5. ລະເມີດລະບຽບສະບັບນີ້ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ;
6. ກໍລະນີອື່ນ ຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

**ມາດຕາ 18 ການຍົກເລີກເປັນຜູ້ໃຫ້ບໍລິການ**

ຜູ້ໃຫ້ບໍລິການຈະຖືກສັ່ງຍົກເລີກໃນກໍລະນີຕໍ່ໄປນີ້:

1. ຜູ້ໃຫ້ບໍລິການຍົກເລີກດ້ວຍຄວາມສະໝັກໃຈ ຕາມການເຫັນດີຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;
2. ບໍ່ສາມາດແກ້ໄຂບັນຫາໃດໜຶ່ງທີ່ກຳນົດໄວ້ໃນ ມາດຕາ 17 ຂອງລະບຽບສະບັບນີ້ພາຍໃນເວລາທີ່ກຳນົດໄວ້ໃນແຈ້ງການຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;
3. ກໍລະນີອື່ນ ຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

## ໝວດທີ 5
## ການຂໍອະນຸຍາດ, ການໂຈະ ແລະ ການຍົກເລີກ ເປັນຜູ້ໃຊ້ບໍລິການ

**ມາດຕາ 19 ເງື່ອນໄຂຂອງຜູ້ໃຊ້ບໍລິການ**

ຜູ້ໃຊ້ບໍລິການຕ້ອງມີເງື່ອນໄຂ ດັ່ງນີ້:

1. ເປັນຜູ້ທີ່ມີສະຕິສຳປະສັນຍະຄົບຖ້ວນ;
2. ມີການຕິດຕັ້ງໂປຣແກຣມຊື້-ຂາຍຮຸ້ນທາງອິນເຕີເນັດໃສ່ຄອມພິວເຕີຂອງຕົນເອງ;
3. ຄອມພິວເຕີຂອງຜູ້ໃຊ້ບໍລິການນຳໃຊ້ ເພື່ອສົ່ງຄຳສັ່ງຊື້-ຂາຍຮຸ້ນທາງອິນເຕີເນັດຕ້ອງມີໂປຣແກຣມຕ້ານໄວລັສ;
4. ມີການເຊື່ອມຕໍ່ສັນຍານເຄືອຄ່າຍອິນເຕີເນັດທີ່ຮັບປະກັນການຊື້-ຂາຍຮຸ້ນທາງອິນເຕີເນັດ;
5. ເປັນລູກຄ້າຂອງຜູ້ໃຫ້ບໍລິການໃດໜຶ່ງ ແລະ ມີສັນຍາໃຊ້ບໍລິການຊື້-ຂາຍຮຸ້ນທາງອິນເຕີເນັດກັບຜູ້ໃຫ້ບໍລິການ;
6. ສຳເນົາສັນຍາແຕ່ງຕັ້ງນາຍໜ້າຊື້-ຂາຍຮຸ້ນ;
7. ສຳເນົາສັນຍາໃຊ້ບໍລິການຊື້-ຂາຍຮຸ້ນທາງອິນເຕີເນັດກັບຜູ້ໃຫ້ບໍລິການ;
8. ສະໜອງຂໍ້ມູນຖືກຕ້ອງ ແລະ ຄົບຖ້ວນຕາມແບບຟອມສະໝັກຂອງຜູ້ໃຫ້ບໍລິການ;
9. ເງື່ອນໄຂອື່ນ ຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

**ມາດຕາ 20 ການຍື່ນສຳນວນຄຳຮ້ອງ**

ຜູ້ໃຊ້ບໍລິການເກົ່າ ແລະ ໃໝ່ສາມາດຍື່ນສຳນວນຄຳຮ້ອງຂໍໃຊ້ບໍລິການດ້ວຍຕົນເອງ ຫຼື ທາງເອເລັກໂຕຣນິກ ຕໍ່ ຜູ້ໃຫ້ບໍລິການດ້ວຍຕົນເອງຊຶ່ງປະກອບມີເອກະສານ ດັ່ງນີ້:

1. ໃບຄຳຮ້ອງຕາມແບບພິມຂອງຜູ້ໃຫ້ບໍລິການ;

2. ສຳເນົາ ບັດປະຈຳຕົວ ຫຼື ໜັງສືຜ່ານແດນ (ສຳລັບຜູ້ລົງທຶນຕ່າງປະເທດ) ທີ່ບໍ່ທັນໝົດອາຍຸ ແລະ ສາມາດນຳໃຊ້ໄດ້ ຕາມການກຳນົດໄວ້ໃນລະບຽບທີ່ກ່ຽວຂ້ອງ;
3. ສຳລັບນັກລົງທຶນຕ່າງປະເທດ ຕ້ອງມີລະຫັດຊື້-ຂາຍສະເພາະທີ່ອອກໃຫ້ໂດຍ ຕະຫຼາດຫຼັກຊັບ ແລະ ມີໃບຢັ້ງຢືນທີ່ຢູ່ ໃນ ສປປ ລາວ;
4. ເລກບັນຊີເງິນຝາກທີ່ໄດ້ເປີດໄວ້ຢູ່ທະນາຄານຕົວແທນ;
5. ເລກບັນຊີຫຼັກຊັບ;
6. ສຳເນົາເອກະສານອື່ນ ຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

**ມາດຕາ 21 ເນື້ອໃນຂອງສັນຍາໃຊ້ບໍລິການ**

ສັນຍາລະຫວ່າງ ຜູ້ໃຊ້ບໍລິການ ກັບ ຜູ້ໃຫ້ບໍລິການ ຕ້ອງມີເນື້ອໃນຕົ້ນຕໍ ດັ່ງນີ້:

1. ຂອບເຂດການໃຊ້ ແລະ ການໃຫ້ບໍລິການ;
2. ເງື່ອນໄຂຂອງຜູ້ໃຊ້ບໍລິການຕາມ ມາດຕາ 19 ຂອງລະບຽບສະບັບນີ້;
3. ການປ່ຽນແປງ ແລະ ການຮັກສາລະຫັດຜ່ານ;
4. ສິດ ແລະ ໜ້າທີ່ຂອງຄູ່ສັນຍາລະຫວ່າງຜູ້ໃຫ້ບໍລິການ ແລະ ຜູ້ໃຊ້ບໍລິການ;
5. ຂໍ້ຍົກເວັ້ນຂອງຜູ້ໃຫ້ບໍລິການ;
6. ການໃຊ້ແທນຄ່າເສຍຫາຍທີ່ເກີດຂຶ້ນ;
7. ການໂຈະ ແລະ ການຍົກເລີກສັນຍາ;
8. ການປ່ຽນແປງຂໍ້ມູນຂອງຜູ້ໃຊ້ບໍລິການ;
9. ວິທີການແກ້ໄຂຂໍ້ຂັດແຍ່ງ;
10. ຄ່າທຳນຽມໃຫ້ບໍລິການ;
11. ເນື້ອໃນອື່ນ ຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

**ມາດຕາ 22 ການໂຈະການນຳໃຊ້ບໍລິການຊົ່ວຄາວ**

ຜູ້ໃຊ້ບໍລິການ ຈະຖືກສັ່ງໂຈະການໃຊ້ບໍລິການຊົ່ວຄາວໃນກໍລະນີ ຕໍ່ໄປນີ້:

1. ມີຫຼັກຖານຢັ້ງຢືນວ່າຜູ້ໃຊ້ບໍລິການດຳເນີນການຊື້-ຂາຍຮຸ້ນບໍ່ເປັນທຳ, ການຊື້-ຂາຍທີ່ມີລັກສະນະຜິດປົກກະຕິ ແລະ ການຟອກເງິນ ທີ່ອາດສົ່ງ ຫຼື ສົ່ງ ຜົນກະທົບຕໍ່ຜົນປະໂຫຍດຂອງຜູ້ລົງທຶນລາຍອື່ນ ຫຼື ສະຖຽນລະພາບຂອງຕະຫຼາດທຶນໂດຍລວມ;
2. ບໍ່ປະຕິບັດຕາມເງື່ອນໄຂໃດໜຶ່ງທີ່ກຳນົດໄວ້ໃນ ມາດຕາ 19 ຂອງລະບຽບສະບັບນີ້;
3. ດຳເນີນການໃດໜຶ່ງທີ່ເປັນການລະເມີດຂໍ້ກຳນົດທີ່ລະບຸໄວ້ໃນ ມາດຕາ 37, ຂໍ້ 4 ຂອງລະບຽບສະບັບນີ້;
4. ລະເມີດລະບຽບການສະບັບນີ້ ແລະ ລະບຽບການທີ່ກ່ຽວຂ້ອງກັບວຽກງານຫຼັກຊັບ;
5. ກໍລະນີອື່ນ ຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

**ມາດຕາ 23 ການຍົກເລີກການໃຊ້ບໍລິການ**

ຜູ້ໃຊ້ບໍລິການຈະຖືກສັ່ງຍົກເລີກການໃຊ້ບໍລິການໃນກໍລະນີຕໍ່ໄປນີ້:

1. ຜູ້ໃຊ້ບໍລິການຍົກເລີກດ້ວຍຄວາມສະໝັກໃຈ ຕາມການເຫັນດີຂອງຜູ້ໃຫ້ບໍລິການ;

2. ບໍ່ສາມາດແກ້ໄຂບັນຫາໃດໜຶ່ງທີ່ກຳນົດໄວ້ໃນ ມາດຕາ 22 ຂອງລະບຽບສະບັບນີ້ ພາຍໃນກຳນົດເວລາຕາມແຈ້ງການຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;
3. ກໍລະນີອື່ນ ຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

**ມາດຕາ 24 ຄ່າທຳນຽມການຊື້-ຂາຍຮຸ້ນທາງອິນເຕີເນັດ**

ຄ່າທຳນຽມ ໃຫ້ບໍລິການຊື້-ຂາຍຮຸ້ນທາງອິນເຕີເນັດສຳລັບສ່ວນຂອງ ກະຊວງການເງິນ, ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ແມ່ນເກັບເທົ່າກັນກັບຄ່າທຳນຽມໃຫ້ບໍລິການຊື້-ຂາຍຮຸ້ນແບບປົກກະຕິ.

ຄ່າທຳນຽມ ສຳລັບສ່ວນຂອງນາຍໜ້າຊື້-ຂາຍຫຼັກຊັບຂອງບໍລິສັດຫຼັກຊັບ ແມ່ນເກັບຕໍ່າກວ່າຄ່າທຳນຽມຊື້-ຂາຍຮຸ້ນແບບປົກກະຕິ.

ວິທີການເກັບຄ່າທຳນຽມ ໃຫ້ປະຕິບັດຄືກັນກັບການເກັບຄ່າທຳນຽມ ການໃຫ້ບໍລິການຊື້-ຂາຍຮຸ້ນແບບປົກກະຕິ.

## ໝວດທີ 6
## ສິດ, ໜ້າທີ່ ແລະ ຂໍ້ຫ້າມ ຂອງຜູ້ມີສ່ວນກ່ຽວຂ້ອງກັບການເຄື່ອນໄຫວຊື້-ຂາຍຮຸ້ນທາງອິນເຕີເນັດ

**ມາດຕາ 25 ສິດຂອງສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ**

ສຳນັກງານ ຄະນະກຳມະການຄຸ້ມຄອງຫຼັກຊັບ ມີສິດ ດັ່ງນີ້:

1. ສະເໜີຕໍ່ຄະນະກຳມະການຄຸ້ມຄອງຫຼັກຊັບກ່ຽວກັບວຽກງານຄຸ້ມຄອງ, ການສ້າງ ແລະ ການພັດທະນາລະບົບຊື້-ຂາຍຮຸ້ນທາງອິນເຕີເນັດເພື່ອພິຈາລະນາ;
2. ກວດກາລະບົບຊື້-ຂາຍຮຸ້ນທາງອິນເຕີເນັດຂອງເຈົ້າຂອງລະບົບຊື້-ຂາຍຮຸ້ນທາງອິນເຕີເນັດ;
3. ຕິດຕາມ-ກວດກາການເຄື່ອນໄຫວຊື້-ຂາຍຮຸ້ນທາງອິນເຕີເນັດ;
4. ຮຽກເອົາຂໍ້ມູນຕ່າງໆທີ່ກ່ຽວຂ້ອງກັບການເຄື່ອນໄຫວຊື້-ຂາຍຮຸ້ນທາງອິນເຕີເນັດຈາກ ຕະຫຼາດຫຼັກຊັບ, ຜູ້ໃຫ້ບໍລິການ, ຜູ້ໃຊ້ບໍລິການ ແລະ ຜູ້ໃຫ້ບໍລິການອິນເຕີເນັດ;
5. ສະເໜີຕໍ່ເຈົ້າຂອງລະບົບຊື້-ຂາຍຮຸ້ນທາງອິນເຕີເນັດ ເພື່ອປັບປຸງມາດຕະຖານຂອງລະບົບການຊື້-ຂາຍຮຸ້ນທາງອິນເຕີເນັດໃຫ້ມີຄວາມ ທັນສະໄໝ, ວ່ອງໄວ ແລະ ຮັບປະກັນ ໃນການຊື້-ຂາຍຮຸ້ນທາງອິນເຕີເນັດ;
6. ຮັບຮອງເອົາ ການກຳນົດອັດຕາຄ່າທຳນຽມກ່ຽວກັບການຊື້-ຂາຍຮຸ້ນທາງອິນເຕີເນັດ;
7. ສັ່ງໂຈະລະບົບຊື້-ຂາຍຮຸ້ນທາງອິນເຕີເນັດ, ການໃຫ້ບໍລິການ ແລະ ການໃຊ້ບໍລິການຊົ່ວຄາວ;
8. ສັ່ງຍົກເລີກລະບົບການຊື້-ຂາຍຮຸ້ນທາງອິນເຕີເນັດ, ການໃຫ້ບໍລິການ ແລະ ການໃຊ້ບໍລິການ;
9. ຍ້ອງຍໍຕໍ່ຜູ້ມີຜົນງານ ແລະ ປະຕິບັດມາດຕະການຕໍ່ຜູ້ລະເມີດ;
10. ສິດອື່ນ ຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

**ມາດຕາ 26 ໜ້າທີ່ຂອງສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ**

ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ມີໜ້າທີ່ ດັ່ງນີ້:

1. ກຳນົດແຜນ ຍຸດທະສາດ ແລະ ນະໂຍບາຍ ກ່ຽວກັບລະບົບຊື້-ຂາຍຮຸ້ນທາງອິນເຕີເນັດເພື່ອໃຫ້ເຈົ້າຂອງລະບົບຊື້-ຂາຍຮຸ້ນທາງອິນເຕີເນັດ;
2. ວາງທິດທາງ, ແຜນການ, ກົນໄກ, ລະບຽບການຄຸ້ມຄອງເຈົ້າຂອງລະບົບ, ຜູ້ໃຫ້ບໍລິການ, ຜູ້ໃຊ້ບໍລິການ ແລະ ມາດຕະຖານ ກ່ຽວກັບລະບົບຊື້-ຂາຍຮຸ້ນທາງອິນເຕີເນັດ;

3. ຄົ້ນຄວ້າ, ກວດກາ ແລະ ພິຈາລະນາຮັບຮອງກ່ຽວກັບການສ້າງ ແລະ ພັດທະນາລະບົບຊື້-ຂາຍຮຸ້ນທາງອິນເຕີເນັດ ຕາມການສະເໜີຂອງເຈົ້າຂອງລະບົບຊື້-ຂາຍຮຸ້ນທາງອິນເຕີເນັດ;
4. ຄົ້ນຄ້ວາການກຳນົດມາດຕະຖານກ່ຽວກັບລະບົບຊື້-ຂາຍຮຸ້ນທາງອິນເຕີເນັດ;
5. ກວດກາລະບົບຊື້-ຂາຍຮຸ້ນທາງອິນເຕີເນັດຂອງເຈົ້າຂອງລະບົບ;
6. ຕິດຕາມ-ກວດກາການເຄື່ອນໄຫວຊື້-ຂາຍຮຸ້ນທາງອິນເຕີເນັດ;
7. ຮຽກເອົາຂໍ້ມູນຕ່າງໆກ່ຽວກັບການເຄື່ອນໄຫວຊື້-ຂາຍຮຸ້ນທາງອິນເຕີເນັດຈາກ ຕະຫຼາດຫຼັກຊັບ, ຜູ້ໃຫ້ບໍລິການ, ຜູ້ໃຊ້ບໍລິການ ແລະ ຜູ້ໃຫ້ບໍລິການ ເຄືອຂ່າຍອິນເຕີເນັດເມື່ອມີຄວາມຈຳເປັນ;
8. ຄົ້ນຄວ້າມາດຕະການແກ້ໄຂເມື່ອພົບເຫັນເຫດການຊື້-ຂາຍຮຸ້ນທີ່ບໍ່ເປັນທຳ;
9. ຮັບຄຳສະເໜີຈາກທຸກພາກສ່ວນທີ່ຕິດພັນກ່ຽວກັບການເຄື່ອນໄຫວຊື້-ຂາຍຮຸ້ນທາງອິນເຕີເນັດ;
10. ຄົ້ນຄວ້າ ພິຈາລະນາແກ້ໄຂ ຄຳສະເໜີ ແລະ ຄຳຮ້ອງ ຈາກທຸກພາກສ່ວນກ່ຽວກັບການເຄື່ອນໄຫວຊື້-ຂາຍຮຸ້ນທາງອິນເຕີເນັດ;
11. ຄົ້ນຄ້ວາ ແລະ ພິຈາລະນາ ອັດຕາຄ່າທຳນຽມກ່ຽວກັບການຊື້-ຂາຍຮຸ້ນທາງອິນເຕີເນັດ;
12. ຄົ້ນຄວ້າ ແລະ ພິຈາລະນາ ການໂຈະລະບົບຊື້-ຂາຍຮຸ້ນທາງອິນເຕີເນັດ, ການໃຫ້ບໍລິການ ແລະ ການໃຊ້ບໍລິການຊົ່ວຄາວ;
13. ຄົ້ນຄວ້າ ແລະ ພິຈາລະນາ ການຍົກເລີກລະບົບການຊື້-ຂາຍຮຸ້ນທາງອິນເຕີເນັດ, ການໃຫ້ບໍລິການ ແລະ ການໃຊ້ບໍລິການຊົ່ວຄາວ;
14. ຄົ້ນຄວ້າ ແລະ ພິຈາລະນາ ຍ້ອງຍໍ ແລະ ປະຕິບັດມາດຕະການ ຕໍ່ຜູ້ລະເມີດ;
15. ປະຕິບັດໜ້າທີ່ອື່ນ ຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

### ມາດຕາ 27 ສິດຂອງຕະຫຼາດຫຼັກຊັບ

ຕະຫຼາດຫຼັກຊັບ ມີສິດ ດັ່ງນີ້:

1. ຮຽກເອົາຂໍ້ມູນຕ່າງໆ ທີ່ກ່ຽວຂ້ອງກັບການເຄື່ອນໄຫວຊື້-ຂາຍຮຸ້ນທາງອິນເຕີເນັດຈາກ ຜູ້ໃຫ້ບໍລິການ ແລະ ຜູ້ໃຫ້ບໍລິການເຄືອຂ່າຍອິນເຕີເນັດ;
2. ກວດກາສະມາຊິກທີ່ເປັນຜູ້ໃຫ້ບໍລິການຊື້-ຂາຍຮຸ້ນທາງອິນເຕີເນັດ;
3. ສິດອື່ນ ຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

### ມາດຕາ 28 ໜ້າທີ່ຂອງຕະຫຼາດຫຼັກຊັບ

ຕະຫຼາດຫຼັກຊັບ ມີໜ້າທີ່ ດັ່ງນີ້:

1. ຕິດຕາມກວດກາການເຄື່ອນໄຫວຊື້ຂາຍຮຸ້ນທີ່ບໍ່ເປັນທຳ;
2. ຄົ້ນຄ້ວາກ່ຽວກັບຄຳສະເໜີ ແລະ ຄຳຮ້ອງຮຽນຈາກທຸກພາກສ່ວນທີ່ກ່ຽວຂ້ອງກ່ຽວກັບການເຄື່ອນໄຫວຊື້-ຂາຍຮຸ້ນທາງອິນເຕີເນັດເພື່ອພິຈາລະນາແກ້ໄຂ;
3. ສ້າງລະບຽບເພື່ອຄຸ້ມຄອງ ພະນັກງານ ແລະ ສະມາຊິກ ທີ່ເປັນຜູ້ໃຫ້ບໍລິການຊື້-ຂາຍຮຸ້ນທາງອິນເຕີເນັດ;
4. ຄົ້ນຄ້ວາອັດຕາຄ່າທຳນຽມກ່ຽວກັບການຊື້-ຂາຍຮຸ້ນທາງອິນເຕີເນັດ ເພື່ອສະເໜີຕໍ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ເພື່ອພິຈາລະນາຮັບຮອງ;
5. ປະຕິບັດໜ້າທີ່ອື່ນ ຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

### ມາດຕາ 29 ສິດຂອງຜູ້ໃຫ້ບໍລິການ

ຜູ້ໃຫ້ບໍລິການ ມີສິດ ດັ່ງນີ້:

1. ໃຫ້ບໍລິການຊື້-ຂາຍຮຸ້ນທາງອິນເຕີເນັດຕາມການອະນຸຍາດຂອງ ຫ້ອງການ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;
2. ປ່ຽນແປງເນື້ອໃນສັນຍາຊື້-ຂາຍຮຸ້ນທາງອິນເຕີເນັດຕາມການຕົກລົງເຫັນດີຂອງ ຫ້ອງການ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;
3. ຮຽກເອົາຂໍ້ມູນຕ່າງໆ ທີ່ຕິດພັນກັບການເຄື່ອນໄຫວຊື້-ຂາຍຮຸ້ນທາງອິນເຕີເນັດຈາກ ພາກສ່ວນທີ່ກ່ຽວຂ້ອງເມື່ອມີຄວາມຈຳເປັນ;
4. ໃຫ້ບໍລິສັດໃດໜຶ່ງທີ່ຊ່ຽວຊານທາງດ້ານໄອທີ ເປັນຜູ້ພັດທະນາລະບົບທີ່ກ່ຽວຂ້ອງກັບການຊື້-ຂາຍຮຸ້ນທາງອິນເຕີເນັດ;
5. ສິດອື່ນ ຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

### ມາດຕາ 30 ໜ້າທີ່ຂອງຜູ້ໃຫ້ບໍລິການ

ຜູ້ໃຫ້ບໍລິການ ມີໜ້າທີ່ ດັ່ງນີ້:

1. ສ້າງ, ປັບປຸງ ແລະ ພັດທະນາ ລະບົບຊື້-ຂາຍຮຸ້ນທາງອິນເຕີເນັດຕາມມາດຕະຖານທີ່ກຳນົດໄວ້ໃນ ມາດຕາ 6, 7 ແລະ 8 ຂອງລະບຽບສະບັບນີ້;
2. ຄຸ້ມຄອງ ແລະ ບຳລຸງຮັກສາລະບົບຊື້-ຂາຍຮຸ້ນທາງອິນເຕີເນັດ ໃຫ້ສາມາດໃຊ້ງານໄດ້ຢ່າງຕໍ່ເນື່ອງ ແລະ ມີປະສິດທິພາບ;
3. ໃຫ້ບໍລິສັດໃດໜຶ່ງທີ່ຊ່ຽວຊານທາງດ້ານໄອທີ ເປັນຜູ້ພັດທະນາລະບົບທີ່ກ່ຽວຂ້ອງກັບການຊື້-ຂາຍຮຸ້ນທາງອິນເຕີເນັດ;
4. ໃຫ້ຄວາມຮູ້ກ່ຽວກັບການຊື້-ຂາຍຮຸ້ນທາງອິນເຕີເນັດໃຫ້ແກ່ຜູ້ໃຊ້ບໍລິການ;
5. ສ້າງລະບຽບຄຸ້ມຄອງຜູ້ໃຊ້ບໍລິການທີ່ເປັນລູກຄ້າຂອງຕົນ;
6. ສະໜອງໂປຣແກຣມຊື້-ຂາຍຮຸ້ນທາງອິນເຕີເນັດໃຫ້ແກ່ຜູ້ໃຊ້ບໍລິການ;
7. ສ້າງສູນບໍລິການລູກຄ້າເພື່ອສະໜອງຂໍ້ມູນກ່ຽວກັບການຊື້-ຂາຍຮຸ້ນທາງອິນເຕີເນັດ;
8. ແຕ່ງຕັ້ງພະນັກງານຕິດຕາມຜູ້ໃຊ້ບໍລິການຊື້-ຂາຍຮຸ້ນທາງອິນເຕີເນັດ;
9. ຮຽກເອົາຂໍ້ມູນຕ່າງໆກ່ຽວກັບຜູ້ໃຊ້ບໍລິການ ແລະ ສະໜອງໃຫ້ແກ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບເມື່ອມີຄວາມຈຳເປັນ;
10. ກວດກາຂໍ້ມູນຂອງຜູ້ໃຊ້ບໍລິການ ໃຫ້ສາມາດລະບຸໄດ້ເຖິງຕົວຕົນທີ່ແທ້ຈິງຂອງຜູ້ນຳໃຊ້ບໍລິການໃນເວລາຂໍເປີດໃຊ້ບໍລິການ;
11. ສັງລວມຂໍ້ມູນໝາຍເລກປະຈຳເຄື່ອງຄອມພິວເຕີຂອງຜູ້ໃຊ້ບໍລິການຢ່າງເປັນລະບົບ ແລະ ທັນເຫດການຢູ່ສະເໝີ ໂດຍສົມທົບກັບເຈົ້າຂອງລະບົບຊື້-ຂາຍຮຸ້ນທາງອິນເຕີເນັດ;
12. ຄົ້ນຄ້ວາອັດຕາຄ່າທຳນຽມກ່ຽວກັບການຊື້-ຂາຍຮຸ້ນທາງອິນເຕີເນັດ ເພື່ອສະເໜີຕໍ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ເພື່ອພິຈາລະນາຮັບຮອງ;
13. ປະຕິບັດໜ້າທີ່ອື່ນ ຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

### ມາດຕາ 31 ສິດຂອງຜູ້ໃຊ້ບໍລິການ

ຜູ້ໃຊ້ບໍລິການ ມີສິດ ດັ່ງນີ້:

1. ໄດ້ຮັບຂໍ້ມູນກ່ຽວກັບວິທີການນຳໃຊ້ລະບົບການຊື້-ຂາຍຮຸ້ນທາງອິນເຕີເນັດ;

2. ໄດ້ຮັບໂປຣແກຣມຊື້-ຂາຍຮຸ້ນທາງອິນເຕີເນັດ;
3. ສົ່ງຄໍາສັ່ງຊື້-ຂາຍຮຸ້ນທາງອິນເຕີເນັດຕາມເງື່ອນໄຂທີ່ກໍານົດໃນລະບຽບສະບັບນີ້;
4. ປ່ຽນລະຫັດຜ່ານເພື່ອຊື້-ຂາຍຮຸ້ນທາງອິນເຕີເນັດຕາມການເຫັນດີຂອງຜູ້ໃຫ້ບໍລິການ;
5. ສະເໜີ ຫຼື ຮ້ອງຮຽນຕໍ່ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ, ຜູ້ໃຫ້ບໍລິການ, ຕະຫຼາດຫຼັກຊັບກ່ຽວກັບການເຄື່ອນໄຫວທີ່ຕິດພັນກັບການຊື້-ຂາຍຮຸ້ນທາງອິນເຕີເນັດ;
6. ຮຽກຄ່າເສັຍຫາຍທີ່ເກີດຂຶ້ນໃນກໍລະນີລະບົບການຊື້-ຂາຍຮຸ້ນທາງອິນເຕີເນັດຫຼົ້ມ ຈາກຜູ້ໃຫ້ບໍລິການ;
7. ສິດອື່ນ ຕາມການກໍານົດຂອງ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ.

**ມາດຕາ 32 ໜ້າທີ່ຂອງຜູ້ໃຊ້ບໍລິການ**

ຜູ້ໃຊ້ບໍລິການ ມີໜ້າທີ່ ດັ່ງນີ້:

1. ປະຕິບັດຕາມລະບຽບການສະບັບນີ້ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ;
2. ຮັບຜິດຊອບຕໍ່ຄໍາສັ່ງຊື້-ຂາຍຮຸ້ນທາງອິນເຕີເນັດ ທີ່ຕົນໄດ້ສົ່ງຄໍາສັ່ງຊື້-ຂາຍຮຸ້ນເຂົ້າສູ່ລະບົບຊື້-ຂາຍຮຸ້ນທາງອິນເຕີເນັດ;
3. ສະໜອງທຸກຂໍ້ມູນ ທີ່ກ່ຽວຂ້ອງກັບການເຄື່ອນໄຫວຊື້-ຂາຍຮຸ້ນທາງອິນເຕີເນັດ ຕາມການສະເໜີຂອງ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ, ຕະຫຼາດຫຼັກຊັບ, ຜູ້ໃຫ້ບໍລິການ ແລະ ຜູ້ໃຫ້ບໍລິການ ເຄືອຂ່າຍອິນເຕີເນັດ;
4. ລາຍງານກ່ຽວກັບການເຄື່ອນໄຫວຊື້-ຂາຍຮຸ້ນທີ່ບໍ່ເປັນທໍາ ໃນລະບົບຊື້-ຂາຍຮຸ້ນທາງອິນເຕີເນັດໃຫ້ແກ່ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ;
5. ແຈ້ງການ ການຍົກເລີກກ່ຽວກັບການໃຊ້ບໍລິການຊື້-ຂາຍຮຸ້ນທາງອິນເຕີເນັດ ທີ່ຕົນໄດ້ເປີດນໍາໃຊ້ບໍລິການຊື້-ຂາຍຮຸ້ນທາງອິນເຕີເນັດ ກັບ ຜູ້ໃຫ້ບໍລິການ;
6. ປະຕິບັດໜ້າທີ່ອື່ນ ຕາມການກໍານົດຂອງ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ.

**ມາດຕາ 33 ສິດຂອງຜູ້ໃຫ້ບໍລິການສັນຍານເຄືອຂ່າຍອິນເຕີເນັດ**

ຜູ້ໃຫ້ບໍລິການສັນຍານເຄືອຂ່າຍອິນເຕີເນັດ ມີສິດ ດັ່ງນີ້:

1. ປັບປຸງ ແລະ ພັດທະນາລະບົບສັນຍານເຄືອຄ່າຍອິນເຕີເນັດໃຫ້ມີ ປະສິດທິພາບ, ທັນສະໄໝ ແລະ ວ່ອງໄວ, ຮັບປະກັນຄວາມປອດໄພຕາມການຕົກລົງເຫັນດີຂອງຄູ່ສັນຍາ;
2. ປັບປຸງເນື້ອໃນສັນຍານໍາໃຊ້ບໍລິການອິນເຕີເນັດຕາມການຕົກລົງເຫັນດີຂອງຄູ່ສັນຍາ;
3. ສິດອື່ນ ຕາມການກໍານົດຂອງ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ.

**ມາດຕາ 34 ໜ້າທີ່ຂອງຜູ້ໃຫ້ບໍລິການສັນຍານເຄືອຂ່າຍອິນເຕີເນັດ**

ຜູ້ໃຫ້ບໍລິການສັນຍານເຄືອຂ່າຍອິນເຕີເນັດ ມີໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ປັບປຸງ ແລະ ພັດທະນາ ລະບົບສັນຍານເຄືອຄ່າຍອິນເຕີເນັດໃຫ້ມີ ປະສິດທິພາບ, ທັນສະໄໝ ແລະ ວ່ອງໄວ, ຮັບປະກັນຄວາມປອດໄພຕາມການຕົກລົງເຫັນດີຂອງຄູ່ສັນຍາ;
2. ປັບປຸງເນື້ອໃນສັນຍານໍາໃຊ້ບໍລິການອິນເຕີເນັດຕາມການຕົກລົງເຫັນດີຂອງຄູ່ສັນຍາ;
3. ປະຕິບັດໜ້າທີ່ອື່ນ ຕາມການກໍານົດຂອງ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ.

**ມາດຕາ 35 ສິດຂອງເຈົ້າຂອງລະບົບຊື້-ຂາຍຮຸ້ນທາງອິນເຕີເນັດ**

ເຈົ້າຂອງລະບົບຊື້-ຂາຍຮຸ້ນທາງອິນເຕີເນັດ ມີສິດ ດັ່ງນີ້:

1. ສ້າງ, ປັບປຸງ ແລະ ພັດທະນາ ລະບົບຊື້-ຂາຍຮຸ້ນທາງອິນເຕີເນັດຕາມມາດຕະຖານທີ່ກຳນົດໄວ້ໃນ ມາດຕາ 6, 7 ແລະ 8 ຂອງລະບຽບສະບັບນີ້;
2. ປັບປຸງເນື້ອໃນສັນຍາເຊົ່າລະບົບຊື້-ຂາຍຮຸ້ນທາງອິນເຕີເນັດ ຕາມການຕົກລົງເຫັນດີຂອງຄູ່ສັນຍາ ພ້ອມທັງລາຍງານໃຫ້ແກ່ ຫົວໜ້າ ສຳນັກງານ ຄະນະກຳມະການຄຸ້ມຄອງຫຼັກຊັບຊາບ;
3. ສິດອື່ນ ຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

**ມາດຕາ 36 ໜ້າທີ່ຂອງເຈົ້າຂອງລະບົບຊື້-ຂາຍຮຸ້ນທາງອິນເຕີເນັດ**

ເຈົ້າຂອງລະບົບຊື້-ຂາຍຮຸ້ນທາງອິນເຕີເນັດ ມີໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າການສ້າງ, ການປັບປຸງ ແລະ ການພັດທະນາ ລະບົບຊື້-ຂາຍຮຸ້ນທາງອິນເຕີເນັດຕາມມາດຕະຖານທີ່ກຳນົດໄວ້ໃນ ມາດຕາ 6, 7 ແລະ 8 ຂອງລະບຽບສະບັບນີ້;
2. ຄຸ້ມຄອງ ແລະ ບຳລຸງຮັກສາ ລະບົບຊື້-ຂາຍຮຸ້ນທາງອິນເຕີເນັດໃຫ້ສາມາດໃຊ້ງານໄດ້ຢ່າງຕໍ່ເນື່ອງ ແລະ ມີປະສິດທິພາບ;
3. ສັງລວມ ຂໍ້ມູນ, ໝາຍເລກປະຈຳເຄື່ອງຄອມພິວເຕີ ຂອງຜູ້ໃຊ້ບໍລິການຢ່າງເປັນລະບົບ ແລະ ທັນສະໄໝຢູ່ສະເໝີ;
4. ໃຫ້ຄວາມຮ່ວມມືແກ່ຄູ່ສັນຍາເຊົ່າລະບົບຊື້-ຂາຍຮຸ້ນທາງອິນເຕີເນັດ ໃນການສະໜອງຂໍ້ມູນໝາຍເລກປະຈຳເຄື່ອງຄອມພິວເຕີຂອງຜູ້ໃຊ້ບໍລິການ;
5. ທົດແທນຄ່າເສຍຫາຍຕາມມູນຄ່າຕົວຈິງ ໃນກໍລະນີລະບົບການຊື້-ຂາຍຮຸ້ນທາງອິນເຕີເນັດເກີດຂັດຂ້ອງ ຫຼື ຫຼົ້ມ ທີ່ສ້າງຜົນເສຍໃຫ້ແກ່ຜູ້ໃຫ້ບໍລິການຕາມທີ່ໄດ້ລະບຸໃນສັນຍາເຊົ່າລະບົບຊື້-ຂາຍຮຸ້ນທາງອິນເຕີເນັດ;
6. ປະຕິບັດໜ້າທີ່ອື່ນ ຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

**ມາດຕາ 37 ຂໍ້ຫ້າມ**

ຫ້າມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພຶດຕິກຳໃດໜຶ່ງ ບໍ່ວ່າທາງກົງ ຫຼື ທາງອ້ອມ ດັ່ງນີ້:

1. ຫ້າມສຳລັບພະນັກງານ ແລະ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ມີພຶດຕິກຳໃດໜຶ່ງ ດັ່ງນີ້:
   - 1.1. ຊຸກເຊື່ອງ, ປອມແປງເອກະສານ ແລະ ຫຼັກຖານ ທີ່ກ່ຽວຂ້ອງກັບການຊື້-ຂາຍຮຸ້ນທາງອິນເຕີເນັດ;
   - 1.2. ເປີດເຜີຍຂໍ້ມູນທີ່ຕິດພັນກັບການຊື້-ຂາຍຮຸ້ນທາງອິນເຕີເນັດທີ່ ອາດສົ່ງ ຫຼື ສົ່ງ ຜົນກະທົບຕໍ່ຜົນປະໂຫຍດຂອງຜູ້ລົງທຶນລາຍອື່ນ ແລະ ສະຖຽນລະພາບຂອງຕະຫຼາດທຶນໂດຍລວມ;
   - 1.3. ສວຍໃຊ້ ໜ້າທີ່, ຕຳແໜ່ງ ແລະ ຄວາມຮັບຜິດຊອບ ເພື່ອສະແຫວງຫາຜົນປະໂຫຍດໃຫ້ແກ່ຕົນເອງ ຫຼື ຜູ້ອື່ນ ທີ່ບໍ່ສອດຄ່ອງກັບລະບຽບສະບັບນີ້ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ;
   - 1.4. ຂໍ້ຫ້າມອື່ນ ຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

2. ຫ້າມສຳລັບພະນັກງານ ແລະ ຕະຫຼາດຫຼັກຊັບ ມີພຶດຕິກຳໃດໜຶ່ງຕາມການກຳນົດໄວ້ໃນ ຂໍ້ 1.1, 1.2, 1.3 ແລະ 1.4 ຂອງມາດຕານີ້.

3. ຫ້າມສຳລັບພະນັກງານ ແລະ ຜູ້ໃຫ້ບໍລິການ ມີພຶດຕິກຳໃດໜຶ່ງຕາມການກຳນົດໄວ້ໃນ ຂໍ້ 1.1, 1.2, 1.3 ແລະ 1.4 ຂອງມາດຕານີ້ ແລະ ຍັງຫ້າມເພີ່ມເຕີມ ດັ່ງນີ້:
   3.1. ເປີດໃຫ້ບໍລິການລະບົບຊື້-ຂາຍຮຸ້ນທາງອິນເຕີເນັດ ໃຫ້ແກ່ຜູ້ໃຊ້ບໍລິການກ່ອນໄດ້ຮັບອະນຸຍາດຈາກ ຫົວໜ້າ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;
   3.2. ດັດແກ້ ຫຼື ປ່ຽນແປງຄຳສັ່ງຊື້-ຂາຍຮຸ້ນທາງອິນເຕີເນັດ ຂອງຜູ້ໃຊ້ບໍລິການກ່ອນໄດ້ຮັບອະນຸຍາດຈາກຜູ້ໃຊ້ບໍລິການ;
   3.3. ຂໍ້ຫ້າມອື່ນ ຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

4. ຫ້າມສຳລັບຜູ້ໃຊ້ບໍລິການມີພຶດຕິກຳໃດໜຶ່ງ ດັ່ງນີ້:
   4.1. ເປີດເຜີຍຊື່ຜູ້ນຳໃຊ້ ແລະ ລະຫັດຜ່ານຂອງຕົນໃຫ້ຜູ້ອື່ນຮັບຊາບ;
   4.2. ນຳໃຊ້ ຫຼື ໃຫ້ຜູ້ອື່ນນຳໃຊ້ ຊື່ຜູ້ນຳໃຊ້ ແລະ ລະຫັດຜ່ານ ຂອງຕົນເພື່ອສົ່ງຄຳສັ່ງຊື້-ຂາຍຮຸ້ນທາງອິນເຕີເນັດ;
   4.3. ສົ່ງຄຳສັ່ງຊື້-ຂາຍຮຸ້ນທີ່ບໍ່ເປັນທຳເຂົ້າສູ່ລະບົບຊື້-ຂາຍຮຸ້ນທາງອິນເຕີເນັດ;
   4.4. ປອມແປງເອກະສານຕ່າງໆ ເຊັ່ນ: ໜັງສືຜ່ານແດນ ຫຼື ບັດປະຈຳຕົວ ແລະ ເອກະສານ ອື່ນທີ່ກ່ຽວຂ້ອງກັບຕົນເອງ;
   4.5. ຂໍ້ຫ້າມອື່ນ ຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

5. ຫ້າມສຳລັບພະນັກງານ ແລະ ຜູ້ໃຫ້ບໍລິການ ສັນຍານເຄືອຂ່າຍອິນເຕີເນັດມີພຶດຕິກຳໃດໜຶ່ງ ດັ່ງນີ້:
   5.1. ໂຈະຊົ່ວຄາວ, ຍົກເລີກການເຊື່ອມຕໍ່ ຫຼື ນຳເອົາສັນຍານອິນເຕີເນັດໃຫ້ຜູ້ອື່ນໃຊ້ໂດຍບໍ່ໄດ້ຮັບອະນຸຍາດຈາກຄູ່ສັນຍາ;
   5.2. ຂໍ້ຫ້າມອື່ນ ຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

6. ຫ້າມສຳລັບພະນັກງານ ແລະ ເຈົ້າຂອງລະບົບມີພຶດຕິກຳໃດໜຶ່ງຕາມການກຳນົດໄວ້ໃນ ຂໍ້ 1.1, 1.2, 1.3 ແລະ 1.4 ຂອງມາດຕານີ້ ແລະ ຍັງຫ້າມເພີ່ມເຕີມ ດັ່ງນີ້:
   6.1. ສ້າງ, ປັບປຸງ ແລະ ພັດທະນາ ລະບົບຊື້-ຂາຍຮຸ້ນທາງອິນເຕີເນັດກ່ອນໄດ້ຮັບອະນຸຍາດຈາກ ຫົວໜ້າ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;
   6.2. ປ່ຽນແປງມາດຕະຖານຂອງລະບົບຊື້-ຂາຍຮຸ້ນທາງອິນເຕີເນັດຕາມທີ່ກຳນົດໃນ ມາດຕາ 6, 7 ແລະ 8 ຂອງລະບຽບສະບັບນີ້ກ່ອນໄດ້ຮັບອະນຸຍາດຈາກ ຫົວໜ້າ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;
   6.3. ສ້າງຄວາມຫຍຸ້ງຍາກໃນການເຊື່ອມຕໍ່ລະບົບການຊື້-ຂາຍຮຸ້ນທາງອິນເຕີເນັດ ໃຫ້ແກ່ຜູ້ໃຫ້ບໍລິການ;
   6.4. ຂໍ້ຫ້າມອື່ນ ຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

## ໝວດທີ 7
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 38 ນະໂຍບາຍຕໍ່ຜູ້ມີຜົນງານ

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດລະບຽບສະບັບນີ້ ເປັນຕົ້ນ ການສະໜອງຂໍ້ມູນຂ່າວສານກ່ຽວກັບການລະເມີດລະບຽບສະບັບນີ້ຈະໄດ້ຮັບການ ຍ້ອງຍໍ ຫຼື ນະໂຍບາຍອື່ນ ຕາມລະບຽບການ.

### ມາດຕາ 39 ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ລະເມີດລະບຽບສະບັບນີ້ທີ່ກໍ່ໃຫ້ເກີດຄວາມເສຍຫາຍແກ່ ລັດ, ສັງຄົມ, ບຸກຄົນ ຫຼື ນິຕິບຸກຄົນ ຈະຖືກ ສຶກສາອົບຮົມ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສັຍຫາຍທາງແພ່ງ ຫຼື ຮັບຜິດຊອບທາງອາຍາ ຕາມກໍລະນີ ເບົາ ຫຼື ໜັກ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍຫຼັກຊັບ ແລະ ລະບຽບກົດໝາຍອື່ນທີ່ກ່ຽວຂ້ອງ.

## ໝວດທີ 8
## ບົດບັນຍັດສຸດທ້າຍ

### ມາດຕາ 40 ການຈັດຕັ້ງປະຕິບັດ

ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ, ຕະຫຼາດຫຼັກຊັບ, ຜູ້ໃຫ້ບໍລິການ, ຜູ້ໃຊ້ບໍລິການ, ຜູ້ໃຫ້ບໍລິການສັນຍານເຄືອຂ່າຍອິນເຕີເນັດ, ເຈົ້າຂອງລະບົບຊື້-ຂາຍຮຸ້ນທາງອິນເຕີເນັດ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດລະບຽບສະບັບນີ້ ຕາມຂອບເຂດສິດ ແລະ ໜ້າທີ່ຂອງຕົນ.

### ມາດຕາ 41 ຜົນສັກສິດ

ລະບຽບສະບັບນີ້ມີຜົນສັກສິດນັບແຕ່ວັນ ປະທານ ຄະນະກຳມະການຄຸ້ມຄອງຫຼັກຊັບ ລົງລາຍເຊັນ ເປັນຕົ້ນໄປ.

**ປະທານ ຄະນະກຳມະການຄຸ້ມຄອງຫຼັກຊັບ**

ສົມສະຫວາດ ເລັ່ງສະຫວັດ